ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 03 /ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2023

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຢູ່ ສປປ ລາວ.

**ເລື່ອງ:** ເປີດຮັບຄົ້ນຄວ້າພິຈາລະນາການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນ ທະນາຄານ ຢູ່ ສປປ ລາວ ໃນຮູບແບບ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບ ເລກທີ 1041/ທຫລ, ລົງວັນທີ 25 ພະຈິກ 2016;
- ອີງຕາມ ແຈ້ງການ ການໂຈະຊົ່ວຄາວການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ສະບັບເລກທີ 95/ກຄສງ, ລົງວັນທີ 18 ພຶດສະພາ 2017.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ໃນໄລຍະຜ່ານມາ ກົມຄຸ້ມຄອງສະຖາບັນການເງິນ ໄດ້ອອກແຈ້ງການໂຈະຊົ່ວຄາວການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນ ຢູ່ ສປປ ລາວ ເພື່ອທົບທວນ ແລະ ປະເມີນຄືນບັນດາລະບຽບນິຕິກຳ ໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງເສດຖະກິດ ຢູ່ ສປປ ລາວ, ຊຶ່ງມາຮອດປະຈຸບັນ ການທົບທວນ ແລະ ປັບປຸງບັນດາລະບຽບນິຕິກຳດັ່ງກ່າວ ໄດ້ສຳເລັດເປັນທີ່ຮຽບຮ້ອຍແລ້ວ. ສະນັ້ນ, ເພື່ອເປັນການສົ່ງເສີມການລົງທຶນໃນຂະແໜງທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈຶ່ງໄດ້ອອກແຈ້ງການມາຍັງບັນດາທ່ານ ດັ່ງນີ້:

1. ທະນາຄານແຫ່ງ ສປປ ລາວ ຈະເປີດຮັບສຳນວນເອກະສານຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ໃນຮູບແບບ ຄື: ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) **ນັບແຕ່ວັນທີລົງລາຍເຊັນໃນແຈ້ງການສະບັບນີ້ ເປັນຕົ້ນໄປ;**
2. ພ້ອມດຽວກັນນີ້ ຂໍແຈ້ງມາຍັງບັນດາທ່ານຊາບວ່າ ທຸກຮູບແບບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວດຳເນີນທຸລະກິດ ຈາກ ທະນາຄານແຫ່ງ ສປປ ລາວ **ແມ່ນບໍ່ອະນຸຍາດໃຫ້ດຳເນີນທຸລະກິດເປັນເງິນຕາຕ່າງປະເທດ.**



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ຖ້າຫາກທ່ານ ມີຄວາມສົນໃຈຢາກດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ສາມາດພົວພັນສອບຖາມຂໍ້ມູນໄດ້ທີ່ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ. ພ້ອມດຽວກັນນີ້, ທ່ານສາມາດເຂົ້າເບິ່ງລາຍລະອຽດກ່ຽວກັບການປະກອບເອກະສານຂໍອະນຸຍາດດຳເນີນທຸລະກິດ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ ໄດ້ທີ່ **www.bol.gov.la** →**ຄູ່ມືແລະແບບພິມຕ່າງໆ** → **ແບບພິມຕ່າງໆ** → **ຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ** ຫຼື ສາມາດສອບຖາມຂໍ້ມູນເພີ່ມຕື່ມ ຈາກ ພະແນກຄົ້ນຄວ້າສ້າງຕັ້ງ, ກົມຄຸ້ມຄອງສະຖາບັນການເງິນ ໄດ້ໃນໂມງລັດຖະການ, ໂທລະສັບ: 021 265712 ຫຼື 021 265713.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຢູ່ ສປປ ລາວ ເພື່ອຊາບ.

ເຊັນແທນຫົວໜ້າກົມ
ຮອງຫົວໜ້າກົມ

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ວິໄລມິດ ອັກຄະວົງ